## ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດທີ 7 ກຸມພາ 2021 (02-07-2021)

---

## ຄວາມໃກ້ຊິດສນິດສນົມກັບພຣະເຈົ້າ.

| |
|---|
| ບາງທາງທີ່ໃຫຍ່ທີ່ສຸດທີ່ສື່ສານອີເລັກໂທຣນິກໄດ້ສົ່ງຜົນກະທົບຕໍ່ຊີວິດຂອງທ່ານນັ້ນແມ່ນຫຍັງ? |

**ຈຸດສຳຄັນໃນບົດຮຽນ:** ຄຳອະທິຖານນຳພວກເຮົາເຂົ້າໃກ້ຊິດກັບພຣະເຢຊູຫຼາຍຂຶ້ນໃນຂນະທີ່ຫົວໃຈຂອງພວກເຮົາສອດຄ່ອງກັບພຣະທັຍຂອງພຣະອົງ.

**ພຣະຄັມພີຕອບສນອງຕໍ່ຊີວິດ:**

ຂ້ອຍໄດ້ເລີ່ມສົງສັຍວ່າພວກເຮົາເປັນເຈົ້າຂອງໂທຣະສັບມືຖືຫຼືມັນເປັນເຈົ້າຂອງພວກເຮົາກັນແທ້? ພວກເຮົາກັບກາຍຂຶ້ນກັບມັນສຳລັບການສັ່ງຊື້ສິ່ງຂອງຕ່າງໆ, ແຜນທີ່ຊີ້ທິດທາງທີ່ຈະໄປ, ແລະຫຼິ້ນເກມໂດຍບໍ່ສິ້ນສຸດບໍ່ໄດ້ເອີ່ຍເຖິງການໂທຣະສັບຫາກັນເປັນບາງຄັ້ງບາງຄາວ. ນຶ່ງໃນການໃຊ້ງານທີ່ໄດ້ຮັບຄວາມນິຍົມຫຼາຍທີ່ສຸດຂອງໂທຣະສັບມືຖືແມ່ນການເຂົ້າເຖິງທຸກຮູບແບບຂອງສື່ສັງຄົມຕົວຢ່າງ: ເຟສບຸກ, ທວິທເຕີຣ໌, ອິນສະຕາແກຣມ, ແທັກແມສເສຈ໌ (ສົ່ງຂໍ້ຄວາມ). ສື່ສັງຄົມມີພາກສ່ວນໃນຊີວິດຂອງພວກເຮົາຫຼາຍຊໍ່າໃດ? ຄິດສເລັ່ຍແລ້ວປະມານ 3.2 ຕື້ຄົນໃຊ້ເວລາປະມານ 2 ຊົ່ວໂມງ ກັບ 22 ນາທີ ຕໍ່ຄົນໃຊ້ສື່ສັງຄົມໃນແຕ່ລະວັນ.

ມັນສາມາດເປັນການຍາກທີ່ຈະຕ້ານທານຕໍ່ການຮີບຮ້ອນທີ່ຈະກວດເບິ່ງສື່ສັງຄົມ. ການຄົ້ນຄວ້າວິຈັຍສະແດງໃຫ້ເຫັນວ່າເມື່ອຜູ້ຄົນຍອມຈຳນົນຕໍ່ການບັງຄັບນັ້ນ, ລະດັບຂອງຄວາມວິຕົກກັງວົນຂອງພວກເຂົາເຈົ້າຈະເພີ່ມສູງຂຶ້ນ. ເມື່ອຖືກເຊື່ອມໂຍງຕໍ່ສື່ສັງຄົມຫຼືກຳລັງຕອບຂໍ້ຄວາມໂດຍບໍ່ສິ້ນສຸດ, ມັນເປັນການຍາກສຳລັບພວກເຂົາເຈົ້າທີ່ຈະຢຸດເຊົາ. ພວກເຂົາເຈົ້າມີຄວາມຮູ້ສຶກຖືກບັງຄັບໃຫ້ສືບຕໍ່ກວດກາຢູ່ຕໍ່ໄປ-ໃນກໍລະນີທີ່ຈະມີຫຍັງເກີດຂຶ້ນ.

ສື່ສັງຄົມອາດຈະສ້າງສະພານ, ແຕ່ເຊັ່ນດຽວກັນມັນອາດຈະສ້າງກຳແພງ. ເລື້ອຍເກີນໄປທີ່ພວກເຮົາໄດ້ໃຊ້ເວລາກັບໂປຣແກຣມສື່ສັງຄົມຂອງພວກເຮົາແລະພວກເຮົາກໍ່ຂາດຄວາມສັມພັນທະພາບທີ່ສຳຄັນທີ່ສຸດທີ່ພວກເຮົາມີ. ພວກເຮົາສູນເສັຽຄວາມສຸກອັນຍິ່ງໃຫຍ່ໃນການໃຊ້ເວລາຢ່າງບໍ່ຂາດສະບັ້ນໜ້າຕໍ່ໜ້າກັບເພື່ອນໆແລະຄອບຄົວ, ແລະພວກເຮົາສູນເສັຽໂອກາດໃນການຮູ້ຈັກກັບພຣະເຈົ້າຢ່າງແທ້ຈິງ.

**ພຣະຄັມພີກ່າວວ່າແນວໃດ?** (ເບິ່ງຕາມຫົວຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ໂຢຮັນ17:1-5</u>

*[1]ເມື່ອພຣະເຢຊູຊົງກ່າວຖ້ອຍຄຳເຫລົ່ານີ້ແລ້ວພຣະອົງກໍຊົງເງີຍພຣະພັກຂຶ້ນເບິ່ງຟ້າໂດຍຊົງກ່າວວ່າ, "ພຣະບິດາເອີຍ,*
*ເຖິງເວລາແລ້ວຂໍຊົງໂຜດໃຫ້ພຣະບຸດຂອງພຣະອົງໄດ້ຮັບກຽດຕິຍົດເພື່ອພຣະບຸດຈະໄດ້ຖວາຍກຽດຕິຍົດແດ່ພຣະ-*
*ອົງ.[2]ເໝືອນດັ່ງພຣະອົງໄດ້ຊົງປະທານໃຫ້ພຣະບຸດມີສິດອຳນາດເໜືອມະນຸດທັງປວງເພື່ອໃຫ້ພຣະບຸດປະທານຊີວິດ-*
*ອັນຕລອດໄປເປັນນິດແກ່ທຸກຄົນທີ່ພຣະອົງໄດ້ຊົງມອບໃຫ້ແກ່ພຣະບຸດນັ້ນ.[3]ນີ້ແຫລະ, ແມ່ນຊີວິດອັນຕລອດໄປເປັນ-*
*ນິດຄືທີ່ເຂົາຮູ້ຈັກພຣະອົງຜູ້ຊົງເປັນພຣະເຈົ້າທ່ຽງແທ້ອົງດຽວແລະຮູ້ຈັກພຣະເຢຊູຄຣິດທີ່ພຣະອົງຊົງໃຊ້ມາ.[4]ຂ້ານ້ອຍ-*
*ໄດ້ຖວາຍກຽດຕິຍົດແດ່ພຣະອົງໃນໂລກຂ້ານ້ອຍໄດ້ເຮັດກິຈການທີ່ພຣະອົງຊົງໃຫ້ຂ້ານ້ອຍເຮັດນັ້ນສຳເຣັດແລ້ວ.*
*[5]ບັດນີ້ພຣະບິດາເອີຍ, ຂໍຊົງໂຜດໃຫ້ຂ້ານ້ອຍມີກຽດຕິຍົດຕໍ່ພຣະພັກຂອງພຣະອົງເອງຄືກຽດຕິຍົດທີ່ຂ້ານ້ອຍມີກັບ*
*ພຣະອົງກ່ອນໂລກບໍ່ທັນມີນັ້ນ.*

ການຮູ້ຈັກພຣະເຈົ້າມີຂໍ້ກຳນົດໃຫ້ພວກເຮົາໃຊ້ເວລາກັບພຣະອົງ-ທັງສອງຊ່ວງເວລາຄືເວລາກັບພຣະຄຳຂອງພຣະອົງ ແລະເວລາອະທິຖານຢ່າງຈິງໃຈ. ການອະທິຖານຢ່າງຈິງໃຈແມ່ນການອະທິຖານຢ່າງເລິກເຊິ່ງ. ມັນເປັນການໄປໄກກວ່າຜິວເຜີນເກີນຄຳທີ່ວ່າ "ເລົ່າຄຳອະທິຖານ" ຫຼື ຮ້ອງໃຫ້ຄ່ຳຄວນຂໍຄວາມຊ່ວຍເຫຼືອເມື່ອຕົກຢູ່ໃນວິກິດການຫຼືໂສກນາຕກັມ. ເພື່ອເປັນການຮູ້ຈັກພຣະເຈົ້າຢ່າງແທ້ຈິງ-ມີຄວາມໃກ້ຊິດສນິດສນົມກັບພຣະເຈົ້າ-ພວກເຮົາຈຳເປັນຕ້ອງກ້າວໄປໄກກວ່າການທ່ອງຈຳແລະບັນຊີຄຳຂໍຂອງພວກເຮົາແລະເຊື່ອມຕໍ່ແທ້ໆກັບພຣະບິດາເທິງຟ້າສວັນ. <u>ພວກເຮົາຈຳເປັນຕ້ອງລົງເລິກ! (ມີຄວາມສຳພັນໃກ້ຊິດສນິດສນົມກັບພຣະເຈົ້າຢ່າງເລິກເຊິ່ງ).</u>

ໃນພຣະຄັມພີ ໂຢຮັນ ບົດທີ່ 17,"ວາຣະສຸດທ້າຍ" ຂອງອົງພຣະເຢຊູໄດ້ມາເຖິງແລ້ວ. ທ່າມກາງ "ວາຣະສຸດທ້າຍ", ພຣະອົງໄດ້ຊົງອະທິຖານວ່າ ເຖິງແມ່ນວ່າພຣະບິດາຊົງພວມຖວາຍພຣະສະງ່າຣາສີແດ່ພຣະອົງ, ພຣະອົງຈະຊົງຖວາຍພຣະສະງ່າຣາສີແດ່ພຣະເຈົ້າພຣະບິດາ. ພຣະສະງ່າຣາສີຂອງພຣະເຈົ້າຊຶ່ງຄັ້ງນຶ່ງໄດ້ຊົງສະຖິດຢູ່ທີ່ພຣະວິຫານ, ປັດຈຸບັນນີ້ຊົງສະຖິດຢູ່ໃນອົງພຣະຄຣິດທ່າມກາງປະຊາກອນຂອງພຣະເຈົ້າ "ພຣະທັມໄດ້ຊົງບັງເກີດເປັນມະນຸດ ແລະຊົງອາສັຍຢູ່ທ່າມກາງເຮົາທັງຫຼາຍບໍຣິບູນດ້ວຍພຣະຄຸນແລະຄວາມຈິງ ເຮົາທັງຫຼາຍໄດ້ເຫັນພຣະສະງ່າຣາສີຂອງພຣະອົງຄືພຣະສະງ່າຣາສີອັນສົມກັບພຣະບຸດອົງດຽວຂອງພຣະບິດາ" (ຢຮ 1:14). ອົງພຣະເຢຊູໄດ້ຊົງອະທິຖານໃຫ້ບັນດາຜູ້ທີ່ໄດ້ຊົງຖືກມອບຊີວິດນິຣັນໃຫ້ນັ້ນ<u>ຈະໄດ້ເຫັນພຣະສະງ່າຣາສີນັ້ນ</u>.

| ການຖວາຍພຣະກຽດແດ່ພຣະເຈົ້າໃນວັທນະທຳຂອງພວກເຮົານັ້ນ ມັນເປັນລັກສະນະແບບໃດ? |
| --- |

ຕິດຕາມຕົວຢ່າງຂອງອົງພຣະເຢຊູ, ພວກເຮົາຈຳເປັນອະທິຖານເຊັ່ນດຽວກັນເພື່ອບັນດານຄົນໃຫ້ໄດ້ເຫັນພຣະສະງ່າຣາສີທີ່ພຣະເຈົ້າໄດ້ຊົງເປີດເຜີຍ. ມັນເປັນສິ່ງສຳຄັນທີ່ຕ້ອງສັງເກດວ່າ: ສິ່ງທຳອິດທີ່ພຣະເຢຊູໄດ້ອະທິຖານແມ່ນເພື່ອພຣະເຈົ້າຈະຊົງໄດ້ຮັບພຣະສະງ່າຣາສີ. ຄວາມປາຖນາຂອງພວກເຮົາທີ່ຈະເຫັນພຣະສະງ່າຣາສີຂອງພຣະເຈົ້າແມ່ນເໜືອກວ່າຄວາມປາຖນາທຸກຢ່າງແລະຂໍ້ສເນີແລກຂອງພວກເຮົາຕ້ອງແມ່ນສຳລັບພຣະສະງ່າຣາສີຂອງພຣະອົງ. ແບບຢ່າງການອະທິຖານ ທີ່ພຣະເຢຊູໄດ້ຊົງມອບໃຫ້ແກ່ພວກເຮົາອະທິຖານເລີ່ມຕົ້ນດ້ວຍຂໍ້ສເນີ: "*ຂ້າແດ່ພຣະບິດາຂອງຂ້າພຣະອົງທັງຫຼາຍຜູ້ຊົງສະຖິດໃນສວັນ ຂໍໃຫ້ພຣະນາມຂອງພຣະອົງເປັນທີ່ໂຄຣົບບູຊາ*"(ມທ 6:9). *<u>ພວກເຮົາສແວງຫາພຣະສະງ່າຣາສີຂອງພຣະເຈົ້າເໜືອສິ່ງອື່ນໃດທັ້ງສິ້ນ</u>* !

ເມື່ອພວກເຮົາຕິດຕາມຕົວຢ່າງຂອງພຣະເຢຊູ, ພວກເຮົາອະທິຖານໃນສິ່ງທີ່ພຣະອົງໄດ້ອະທິຖານເພື່ອນັ້ນ-ແລະໃນທາງດຽວກັນກັບທີ່ພຣະອົງໄດ້ອະທິຖານເພື່ອສິ່ງເຫຼົ່ານັ້ນ. ພວກເຮົາຕ້ອງຫຼີກໜີຈາກການຫຍັບເຂົ້າໃກ້ພຣະເຈົ້າ<u>ໃນເມື່ອຍາມພວກເຮົາຕ້ອງການສິ່ງໃດສິ່ງນຶ່ງຈາກພຣະອົງເທົ່ານັ້ນ</u>. ພວກເຮົາຈຳເປັນຕ້ອງຮຽນອະທິຖານເພາະວ່າພວກເຮົາຕ້ອງ**ການພຣະອົງ**. ພວກເຮົາຕ້ອງສແວງຫາພຣະອົງແລະບໍ່ແມ່ນພຽງແຕ່ສິ່ງຂອງຈາກພຣະອົງເທົ່ານັ້ນ.

ເຖິງແມ່ນວ່າພວກເຮົາອະທິຖານສຳລັບສະງ່າຣາສີຂອງພຣະອົງ, ພວກເຮົາຈະພົບພຣະອົງໃນສະງ່າຣາສີຂອງພຣະອົງ. ເມື່ອພວກເຮົາເຮັດໃຫ້ຊີວິດການອະທິຖານເລິກເຊິ່ງ-ອະທິຖານຕາມແບບຢ່າງຂອງພຣະເຢຊູ-ພວກເຮົາມີປະສົບການໃນພຣະສະງ່າຣາສີຂອງພຣະອົງ: ຄວາມບໍຣິສຸດ, ພຣະອຳນາດ, ແລະພຣະຣັສມີພາບຂອງພຣະອົງ. ການອະທິຖານ**ຢ່າງຈິງໃຈ**ເຮັດໃຫ້ຄວາມໃກ້ຊິດສນິດສນົມກັບພຣະເຈົ້າເພີ່ມສູງຂຶ້ນ. *ໃນຂະນະທີ່ພວກເຮົາມາຮູ້ຈັກຄວາມໃກ້ຊິດສນິດສນົມກັບພຣະເຈົ້າ, ພຣະອົງຈະຊົງເປີດເຜີຍພຣະສະງ່າຣາສີຂອງພຣະອົງໃຫ້ພວກເຮົາໄດ້ເຫັນຢ່າງເຕັມຕາເຕັມໃຈ.*

## 2. <u>ໂຢຮັນ 17:21-23</u>

*[21] ເພື່ອເຂົາທັງໝົດຈະເປັນອັນນຶ່ງອັນດຽວກັນດັ່ງທີ່ພຣະອົງຄືພຣະບິດາຊົງສະຖິດໃນຂ້ານ້ອຍແລະຂ້ານ້ອຍໃນພຣະອົງ ເພື່ອໃຫ້ເຂົາຢູ່ໃນເຮົາທັງສອງເໝືອນກັນເພື່ອໂລກຈະໄດ້ເຊື່ອວ່າແມ່ນພຣະອົງແຫລະ, ຊົງໃຊ້ຂ້ານ້ອຍມາ.[22] ແລະກຽດ*

*ຕິຍົດທີ່ພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນຂ້ານ້ອຍກໍໄດ້ໃຫ້ແກ່ເຂົາເພື່ອເຂົາຈະເປັນອັນນຶ່ງອັນດຽວກັນເໝືອນດັ່ງເຮົາທັງສອງເປັນອັນນຶ່ງອັນດຽວກັນນັ້ນ.*[23] *ຂ້ານ້ອຍຢູ່ໃນເຂົາແລະພຣະອົງຊົງຢູ່ໃນຂ້ານ້ອຍເພື່ອເຂົາຈະເປັນອັນນຶ່ງອັນດຽວກັນຢ່າງສົມບູນເພື່ອໂລກຈະໄດ້ຮູ້ວ່າແມ່ນພຣະອົງນັ້ນແຫຼະ, ຊົງໃຊ້ຂ້ານ້ອຍມາ ແລະພຣະອົງຊົງຮັກເຂົາເໝືອນດັ່ງທີ່ພຣະອົງຊົງຮັກຂ້ານ້ອຍ.*

ພຣະເຢຊູໄດ້ຊົງອະທິຖານເພື່ອຄວາມເປັນອັນນຶ່ງອັນດຽວກັນ(ຄວາມສາມັກຄີ)ເຊັ່ນດຽວກັນ. ບັນດາຜູ້ເຊື່ອຕ້ອງການຄວາມສາມັກຄີແຕ່ປາງກ່ອນ, ແລະພວກເຮົາຍິ່ງຕ້ອງການສິ່ງນີ້ໃນປັດຈຸບັນ. <u>ຄວາມສາມັກຄີຈະເປັນໄປໄດ້ບໍ່</u>? ຝູງຄົນທີ່ມີ: ລາຍການ, ເບື້ອງຫຼັງ, ຄວາມເຊື່ອ, ແລະ ທັສນະຄະຕິທີ່ແຕກຕ່າງກັນຈະສາມາດເຂົ້າຮ່ວມເປັນອັນນຶ່ງອັນດຽວກັນໄດ້ຈິງຫຼື? ຄວາມແຕກແຍກແລະຜິດຖຽງກັນມີຢູ່ທຸກຫົນທຸກແຫ່ງ. ພວກເຮົາປະເຊີນໜ້າກັບມັນໃນດ້ານການເມືອງ, ພາຍໃນຄອບຄົວ, ແລະສະຖານທີ່ທຳງານ.

ໃນຂນະທີ່<u>ທຸກໆຄົນ</u>ປາຖນາຄວາມສາມັກຄີ, ແຕ່ມີ<u>ຈຳນວນສ່ວນນ້ອຍ</u>ພອັມທີ່ຈຳເປັນຈະເສັຽສລະກັບກາຍມາເປັນແລະສືບຕໍ່ໃນການເປັນອັນນຶ່ງອັນດຽວກັນ. ຄວາມສາມັກຄີບໍ່ໄດ້ໝາຍຄວາມວ່າຄົນອື່ນໆຈະເຫັນດີກັບພວກເຮົາໝົດ, ທຳຕົນເໝືອນສິ່ງທີ່ພວກເຮົາປາຖນາ, ປັບຕົວໄປຕາມສິ່ງທີ່ພວກເຮົາຕ້ອງການ, ແລະຍອມຮັບກັບພວກເຮົາ. <u>ການຮຽກຮ້ອງໃຫ້ຜູ້ອື່ນປະຕິບັດຕາມຕົນເອງເປັນການຕໍ່ຕ້ານຄວາມສາມັກຄີ</u>. ພຣະເຢຊູໄດ້ຊົງອະທິຖານເພື່ອຄວາມເປັນອັນນຶ່ງອັນດຽວກັນບໍ່ແມ່ນເພື່ອຄວາມສອດຄ່ອງ. ຄວາມສາມັກຄີນັ້ນມີຮູບຮ່າງລັກສະນະແບບໃດ? ມັນມີລັກສະນະເໝືອນພຣະເຈົ້າແຫ່ງ<u>**ຕຣີເອການຸພາບ**</u>: ຄວາມເປັນອັນນຶ່ງອັນດຽວກັນຂອງພຣະເຈົ້າພຣະບິດາ, ພຣະເຈົ້າພຣະບຸດ, ແລະ ພຣະເຈົ້າພຣະວິນຍານບໍຣິສຸດ. ພຣະເຢຊູໄດ້ຊົງອະທິຖານ: "*ເພື່ອເຂົາທັງໝົດຈະເປັນອັນໜຶ່ງອັນດຽວກັນດັ່ງທີ່ພຣະອົງຄືພຣະບິດາຊົງສະຖິດໃນຂ້ານ້ອຍແລະຂ້ານ້ອຍໃນພຣະອົງ*" (ຂໍ້ 21). ຂນະທີ່ພຣະບິດາບໍ່ແມ່ນພຣະບຸດ ຫຼື ພຣະວິນຍານບໍຣິສຸດ; ແລະ ພຣະບຸດບໍ່ແມ່ນພຣະບິດາ ຫຼື ພຣະວິນຍານບໍຣິສຸດ; ແລະ ພຣະວິນຍານບໍຣິສຸດບໍ່ແມ່ນພຣະບິດາ ຫຼືພຣະບຸດ;<u>**ພຣະບິດາ, ພຣະບຸດ, ແລະພຣະວິນຍານບໍຣິສຸດຊົງເປັນອົງພຣະເຈົ້າ**</u>.<u>**ພຣະເຈົ້າຊົງເປັນສາມບຸກຄົນແຕ່ເປັນໜຶ່ງດຽວ**</u>.

ພວກເຮົາສາມາດປະສົບຄວາມສາມັກຄີນີ້ຕໍ່ແຕ່ເມື່ອພວກເຮົາຢູ່ໃນພຣະເຈົ້າ ແລະພຣະອົງຊົງສະຖິດຢູ່ໃນພວກເຮົາເທົ່ານັ້ນ. ພຣະເຢຊູໄດ້ຊົງອະທິຖານ:"*ເພື່ອໃຫ້ເຂົາຢູ່ໃນເຮົາທັງສອງເໝືອນກັນ.*" ພວກເຮົາຈຳເປັນຕ້ອງຮ່ວມກັບພຣະອົງໃນການອະທິຖານເພື່ອຄວາມສາມັກຄີ. ເມື່ອບັນດາຜູ້ທີ່ເຊື່ອເຊື່ອມໂຍງຢູ່ກັບພຣະເຈົ້າ-ພວກເຮົາອາສັຍຢູ່ໃນພຣະຄຣິດແລະພຣະອົງຊົງຢູ່ໃນພວກເຮົາ-ຄວາມສາມັກຄີເກີດຂຶ້ນ. <u>ເຮົາຢູ່ໃນພຣະອົງ,ແລະພຣະອົງຢູ່ໃນເຮົາ</u>. **ບໍ່ມີຫົນທາງອື່ນໃດທີ່ຈະນຳໄປສູ່ຄວາມສາມັກຄີເປັນອັນນຶ່ງອັນດຽວກັນ.**

| ຄວາມເປັນອັນນຶ່ງອັນດຽວກັນ (ຄວາມສາມັກຄີ) ມີລັກສະນະຮູບຊົງແບບໃດ? |
|---|

## 3. <u>ໂຢຮັນ17:24-26</u>

[24] *"ໂອພຣະບິດາເອີຍ, ຊຶ່ງພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍນັ້ນຂ້ານ້ອຍກໍປາຖນາຢາກໃຫ້ເຂົາຢູ່ກັບຂ້ານ້ອຍໃນບ່ອນຊຶ່ງຂ້ານ້ອຍຢູ່ນັ້ນເໝືອນກັນເພື່ອເຂົາຈະໄດ້ເຫັນສະງ່າຣາສີຂອງຂ້ານ້ອຍຊຶ່ງພຣະອົງຊົງປະທານໃຫ້ແກ່ຂ້ານ້ອຍເພາະພຣະອົງຊົງຮັກຂ້ານ້ອຍກ່ອນຊົງສ້າງໂລກ.*[25] *ໂອພຣະບິດາຜູ້ຍຸດຕິທັມ, ໂລກນີ້ບໍ່ໄດ້ຮູ້ຈັກພຣະອົງແຕ່ຝ່າຍຂ້າ-ນ້ອຍໄດ້ຮູ້ຈັກພຣະອົງແລະຄົນເຫລົ່ານີ້ໄດ້ຮູ້ວ່າແມ່ນພຣະອົງແຫລະ, ຊົງໃຊ້ຂ້ານ້ອຍມາ.*[26] *ຂ້ານ້ອຍໄດ້ເຮັດໃຫ້ເຂົາຮູ້-ຈັກພຣະນາມຂອງພຣະອົງແລະຈະເຮັດໃຫ້ເຂົາຮູ້ອີກເພື່ອຄວາມຮັກທີ່ພຣະອົງໄດ້ຊົງຮັກຂ້ານ້ອຍຈະຢູ່ໃນເຂົາແລະຝ່າຍຂ້ານ້ອຍກໍຢູ່ໃນເຂົາ."*

ໃນຂນະທີ່ພວກເຮົາຈະເຣີນເຕີບໂຕໃນຄວາມສັມພັນກັບພຣະເຈົ້າ, ພວກເຮົາຈະມີຄວາມໃກ້ຊິດສນິດສນົມກັບ

ພຣະອົງ. ຫົວໃຈຂອງພວກເຮົາຈະກາຍເປັນອັນດຽວກັນກັບພຣະທັຍຂອງພຣະອົງ, ແລະຕາມທີ່ພວກເຮົາໄດ້ເຫັນມາ, ຄຳອະທິຖານຂອງພວກເຮົາຈະຈົດຈໍ່ຕໍ່ພຣະສະງ່າຣາສີຂອງພຣະອົງ ແລະສແວງຫາຄວາມສາມັກຄີທ່າມກາງບັນດາຜູ້ທີ່ເຊື່ອ. ຕາມທີ່ພວກເຮົາໄດ້ເຫັນໃນຂໍ້ 24-26, ເມື່ອພວກເຮົາອະທິຖານເໝືອນອົງພຣະເຢຊູ, ຄຳອະທິຖານເຫຼົ່ານັ້ນຍັງຈະລວມເຖິງຄວາມປາຖນາທີ່ຈະເຮັດໃຫ້ຄວາມຮັກຂອງພຣະອົງເປັນທີ່ຮູ້ຈັກແກ່ຄົນອື່ນ ເພື່ອວ່າພວກເຂົາເຈົ້າຈະມີປະສົບການກັບຄວາມຮັກນັ້ນເຊັ່ນກັນ. ຄວາມຮັກນິຣັນມີຢູ່ລະຫວ່າງພຣະບິດາແລະພຣະບຸດ, ແລະຄຳອະທິຖານຂອງພຣະເຢຊູແມ່ນວ່າ: "*ຄວາມຮັກທີ່ພຣະອົງໄດ້ຊົງຮັກຂ້ານ້ອຍຈະຢູ່ໃນເຂົາແລະຝ່າຍຂ້ານ້ອຍກໍຢູ່ໃນເຂົາ.*" **ຄວາມຮັກຂອງພຣະອົງທີ່ມີຕໍ່ພວກເຮົາຖ້ວມລົ້ນ!** ພວກເຮົາຈະສົນໃຈໃນສິ່ງທີ່ພຣະອົງຊົງຫ່ວງໃຍ. ເມື່ອພວກເຮົາເຕີບໂຕໃນການຮູ້ຈັກພຣະອົງ, ພະລັງທີ່ພັກດັນພວກເຮົາຈະເປັນ<u>ຄວາມປາຖນາທີ່ຈະໃຫ້ພຣະອົງຊົງເປັນທີ່ຮູ້ຈັກ</u>. ການຮູ້ຈັກພຣະເຈົ້າ ແລະປະສົບການໃນຄວາມຮັກຂອງພຣະອົງ ຈູງໃຈໃຫ້ພວກເຮົາອະທິຖານເພື່ອບັນດາຜູ້ທີ່ຍັງບໍ່ທັນຮູ້ຈັກກັບພຣະອົງເທື່ອໃຫ້ມາຮູ້ຈັກພຣະອົງ. ເພາະວ່າພຣະເຈົ້າໄດ້ຊົງຮັກໂລກ, ບໍ່ພຽງແຕ່ພວກຜູ້ທີ່ຢູ່ໃນ "ໂລກຂອງພວກເຮົາ" ເທົ່ານັ້ນ, ພວກເຮົາອະທິຖານເພື່ອທຸກໆຊາດ, ແຕ່ວ່າພວກເຮົາຈະອອກໄປເຊັ່ນດຽວກັນທຸກຫົນທຸກແຫ່ງທີ່ພວກເຮົາຖືກຮຽກເອີ້ນໃຫ້ອອກໄປ ແລະຊ່ວຍເຫຼືອຄົນອື່ນໆທີ່ໄດ້ຖືກຮຽກເອີ້ນໃຫ້ໄປປະກາດຂ່າວປະເສີດຕໍ່ຄົນທຸກໆຊາດ. ໃນຂນະທີ່ປະຊາກອນຂອງພຣະເຈົ້າບໍ່ເຫັນດີນຳກັນໃນຫຼາຍຢ່າງ, ພວກເຮົາ<u>ທັງໝົດ</u>ສາມາດເຫັນດີດ້ວຍກັນວ່າ<u>ຜູ້ຄົນຕ້ອງການພຣະຜູ້ເປັນເຈົ້າ</u>. ພວກເຂົາເຈົ້າມີຄວາມຈຳເປັນຮູ້ຈັກ ແລະມີປະສົບການໃນຄວາມຮັກຂອງພຣະເຈົ້າໃນຊີວິດຂອງພວກເພິ່ນ. ເພື່ອທຳໜ້າທີ່ຂອງພວກເຮົາໃນ "ພັນທະກິດແຫ່ງການຄືນດີ" (2 ກຣທ 5:18),ພວກເຮົາຕ້ອງມີວັດຖຸປະສົງອັນດຽວກັນ. ພວກເຮົາສາມາດແລະຈຳເປັນຕ້ອງໃຊ້ທຸກວິຖີທາງທີ່ເປັນໄປໄດ້ເພື່ອແບ່ງປັນຄວາມຮັກຂອງພຣະຄຣິດ. ແລະເມື່ອພວກເຮົາເຮັດ, **<u>ພວກເຮົາໄດ້ຮັບຄວາມຊົມຊື່ນຍິນດີ</u>, <u>ແຕ່ພຣະເຈົ້າຊົງໄດ້ຮັບພຣະສະງ່າຣາສີ</u>.**

| ກຸ່ມຂອງພວກເຮົາໄດ້ຊ່ວຍທ່ານໃຫ້ມີປະສົບການໃນຄວາມຮັກຂອງພຣະເຈົ້າດ້ວຍວິທີໃດ? |
|---|

## ນຳໃຊ້ໃນຊີວິດ:

ທ່ານຈະໃຊ້ຣະບຽບວິນັຍດ້ານຈິດວິນຍານໃນການອະທິຖານຢ່າງໃດເພື່ອນຳທ່ານເຂົ້າໃກ້ຊິດກັບພຣະເຢຊູໃຫ້ຫຼາຍຂຶ້ນ? ຈົ່ງໃຊ້ນຶ່ງໃນການນຳໃຊ້ດັ່ງຕໍ່ລົງໄປນີ້:

- **ຈົ່ງອະທິຖານເພື່ອສະງ່າຣາສີຂອງພຣະເຈົ້າ.** ຈົ່ງທົດແທນເວລາຢ່າງນ້ອຍ 5 ນາທີຂອງການສື່ສັງຄົມຫຼືໂທຣະພາບດ້ວຍການເພີ່ມເວລາໃສ່ການອະທິຖານເພື່ອພຣະສະງ່າຣາສີຂອງພຣະເຈົ້າ.
- **ຈົ່ງອະທິຖານເພື່ອຄວາມສາມັກຄີ.** ຈົ່ງເຕົ້າໂຮມກັບຄົນອື່ນເພື່ອໃຊ້ເວລາໃນການອະທິຖານເຂັ້ມຂົ້ນເພື່ອຄວາມເປັນເອກພາບໃນບັນດາພວກທີ່ເຊື່ອໃນຄຣິສຕະຈັກຂອງທ່ານແລະທົ່ວໂລກ.
- **ຈົ່ງອະທິຖານເພື່ອຄວາມຮັກຂອງພຣະເຈົ້າໃຫ້ເປັນທີ່ຮູ້ຈັກ.** ຈົ່ງຕັ້ງໂມງປຸກໃນໂທຣະສັບມືຖືຂອງທ່ານໃສ່ເວລາ 3:16 ຕອນບ່າຍຂອງທຸກໆວັນ ແລະອະທິຖານພຣະຄັມພີ ໂຢຮັນ 3:16 ເພື່ອຢ່າງນ້ອຍ 3 ຄົນທີ່ຈຳເປັນຕ້ອງຮູ້ຈັກອົງພຣະຄຣິດ. ອະທິຖານເພື່ອການເຜີຍແຜ່ຂ່າວປະເສີດໃຫ້ກະຈາຍໄປຮອບໂລກ. ອະທິຖານເພື່ອໂອກາດທີ່ຈະໄດ້ແບ່ງປັນຂ່າວປະເສີດຂອງພຣະຄຣິດຜ່ານທາງສື່ສັງຄົມໃນທຸກໆຊ່ອງ.

ສື່ສັງຄົມແລະສິ່ງແຊກແຊງ(ລົບກວນ)ອື່ນໆທີ່ທັນສມັຍສາມາດ**<u>ດຶງດູດ</u>**ຄວາມສົນໃຈຂອງພວກເຮົາໄດ້ຖ້າພວກເຮົາບໍ່ລະມັດລະວັງ. ແຕ່ຖ້າພວກເຮົາອະທິຖານແລະທຳຈິດໃຈຂອງພວກເຮົາໃຫ້<u>ສອດຄ່ອງ</u>ກັບນໍ້າພຣະທັຍຂອງພຣະເຈົ້າ, ພຣະອົງ ຊົງສາມາດໃຊ້ສິ່ງເຫຼົ່ານີ້ (ສື່ສັງຄົມ) ໃຫ້ເປັນເຄື່ອງມືໃນການເຂົ້າເຖິງຜູ້ອື່ນເພື່ອອົງພຣະຄຣິດ.

**ອຸປຖັມໂດຍລາວຊາວເທີນບັບຕິສສັມພັນ http://lsbf.us/ ໂດຍ SSK**